ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1247 / ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 16 ກໍລະກົດ 2014

# ແຈ້ງການ

ເຖິງ: - ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

- ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

ເລື່ອງ: ການແຈ້ງຂຶ້ນທະບຽນວິສາຫະກິດ ຂອງນັກລົງທຶນ ຈາກ ສປປ ເກົາຫລີ

ເພື່ອເສີມຂະຫຍາຍສາຍພົວພັນຮ່ວມມືທາງດ້ານເສດຖະກິດ, ຍາດແຍ່ງທຶນຮອນ ແລະ ເທັກໂນໂລຍີ ຈາກ ສປປ ເກົາຫລີ ເຂົ້າໃນການພັດທະນາເສດຖະກິດຂອງປະເທດໃຫ້ມີປະສິດທິຜົນ ແລະ ເປັນຮູບປະທຳຍິ່ງຂຶ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ມອບໃຫ້ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ເຮັດໜ້າທີ່ໃນການຊ່ວຍປະສານງານ ແລະ ພິຈາລະນາ ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຂອງນັກລົງທຶນ ຈາກ ສປປ ເກົາຫລີ ນັບແຕ່ວັນທີ່ແຈ້ງການສະບັບນີ້ ໄດ້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການເປັນຢ່າງອື່ນ;

2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ລາຍງານການຂຶ້ນທະບຽນວິສາຫະກິດ ຂອງຕົນໃນສ່ວນທີ່ກ່ຽວກັບການລົງທຶນດັ່ງກ່າວ ໃຫ້ກົມທະບຽນ ແລະຄຸ້ມຄອງວິສາຫະກິດ ເພື່ອສືບຕໍ່ຊ່ວຍປະສານງານຕໍ່ໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ຍຸວສະຫວາດ ສະແຫວງສຶກສາ